**ສະມາຄມ໌ ປະຊາຊົນພູເຂົາແມ່ນໍາຂ້ ອຽ**

ແມ່ນສະມາຄົມສາມັກຄີສາກົນຂອງປະເທດຝຣັ່ງ (ອົງ ການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ)ສ້າງຕັ້ງຂຶ້ນໃນ ປີ2011ໂດຍມີຈຸດປະສົງເພື່ອສະຫນັບສະຫນູນການເຂົ້າເຖິງ ການປິ່ນປົວສຸຂະພາບທີ່ເທົ່າທຽມກັນຂອງປະຊາຊົນທີ່ ອາໄສຢູ່ເຂດຫ່າງໄກສອກຫຼີກທາງພາກເຫນືອຂອງປະເທດລາວ. ດ້ວຍເຫດຜົນດັ່ງກ່າວ, ສະມາຄົມ PEMM ຈິ່ງ ໄດ້ໃຫ້ການຊ່ວຍເຫຼືອ 3 ວຽກງານຫັກດັ່ງ ນີ້:

– ໃຫ້ການຊ່ວຍເຫຼືອທາງການແພດ: ສະມາຄົມ PEMM ຮ່ວມມກັບບຸກຄະລາກອນການແພດຝຣັ່ງ ຈັດຝຶກ ອົບຮົມໃຫ້ແກ່ໂຮງຫມໍ, ສະຖານທີ່ບໍລິການສາທາລະນະສຸກ ແລະ ສຸກສາລາ ຢູ່ທາງພາກເຫນືອຂອງປະເທດລາວ ເພື່ອເພີ່ມ ທະວີຄວາມສາມາດໃຫ້ແກ່ພະນັກງານແພດຫມໍລາວ ແລະ ເພື່ອເຮັດໃຫ້ເຂົາເຈົ້າສາມາດປັບປຸງຄຸນນະພາບ ການເບິ່ງແຍງ ຄົນເຈັບໃຫ້ດີຂຶ້ນ. ການຝຶກອົບຮົມປະກອບດ້ວຍການໃຫ້ຄວາມຮູ້ແກ່ບຸກຄະລາກອນແພດ, ຫັງຈາກ ນັ້ນໄດລົງ ຢ້ຽມຢາມການຄູະນະຈັດຕັ້ງໂຮງຫມໍເພື່ອໃກ້ຊິດຕິດແທດກັບພະນັກງານແພດຫມໍ ແລະ ເພື່ອປະເມີນ ຄວາມຕ້ອງການຂອງ ເຂົາເຈົ້າ ເທົ່າທີ່ເປັນໄປໄດ້. ສະມາຄົມໄດ້ສະເຫນີການຝຶກອົບຮົມໃນຫົວຂໍ້ຕ່າງໆເຊັ່ນ: ພະຍາດ ຍິງ ແລະ ການປະສູດ,
ພະຍາດເດັກ, ພະຍາດເບົາຫວານ, ການສກສາການບາດເຈັບ ແລະ ບາດແຜ, ສຸຂະອະນາໄມໃນໂຮງຫມ, ແລະ ອື່ນໆ.
ຄວາມຕ້ອງການໃນການຝຶກອົບຮົມ ແລະ ອຸປະກອນ ແມ່ນຈະຕິດຕພົວພັນກັບອໍານາດການປົກຄອງແຂວງ ແລະ ເມອງ ຫ ຜູ້ອໍານວຍການໂຮງຫມ ແລະ ສຸກສາລາໂດຍກົງ.







–ປັບປຸງໂຄງສ້າງດ້ານສຸຂາພບິານ:ສະມາຄົມPEMMຮູ້ວ່າປະຊາຊົນລາວທາງພາກເຫນືອສວ່ນຫາຍມີຄວາມ ຫຍຸ້ງຍາກໃນການຊົມໃຊ້ນໍ້າ.ດັ່ງນັ້ນສະມາຄົມຈີ່ງໄດໃຫ້ຄວາມຊ່ວຍເຫຼືອໂຄງການສະຫນອງນໍ້າແລະສຸຂາພິບານເພື່ອ ຕອບສະຫນອງກັບສິ່ງທ້າທາຍດ້ານສຸຂະອະນາໄມຢູ່ໃນໂຮງຫມໍ,ລວມເຖິງການນໍາໃຊ້ນໍ້າໃນຊີວດິປະຈໍາວັນຂອງ ປະຊາຊົນ ອີກດວ້ ຍ. ການຊົມໃຊ້ນໍ້າສະອາດແມ່ນມີຄວາມຈໍາເປັນ ເພາະຈະສາມາດຫຼຸດຜ່ອນຄວາມສ່ຽງຂອງພະ ຍາດທີ່ເກີດຈາກ ນໍ້າ ແລະ ຫຼຸດຜ່ອນການເສຍຊີວິດໃນບັນດາກຸ່ມສ່ຽງທີ່ສຸດຄ: ເດັກນ້ອຍຕໍ່າກວ່າ 5 ປີ, ແມ່ຍງິ ຖ ພາ ແລະ ຜູ້ສູງອາຍຸ.





– ປົກປັກຮັກສາສິ່ງແວດລ້ອມ ແລະ ຈັດການສິ່ງເສດເຫຼືອຈາກໂຮງຫມໍເພື່ອຫຼີກລ່ຽງຄວາມສ່ຽງຈາກການປົນເປື້ອນ ແລະ ມົນລະພິດ.





ການຈັດຕັ້ງປະຕິບັດວຽກງານຕ່າ ງໆແມ່ນໄດ້ຮັບການຮ່ວມມກບັ ອຳນາດການປົກຄອງທ້ອງຖິ່ນ ເຊິ່ງໃນນນັ້ ມີຂັ້ນແຂວງ, ຂັ້ນເມອືງ ແລະ ຊມຸ ຊົນ. ສິ່ງສຳຄັນທີ່ສຸດ, ສະມາຄົມ PEMM ມີຄວາມປາດຖະຫນາທີ່ຈະເສີມສ້າງທັກສະ

ແລະ ໃຫ້ການຊ່ວຍເຫຼືອລະບບົ ສາທາລະນະສຸກຂອງລາວ ໂດຍບໍ່ໄດ້ມີເຈດຕະນາເຂົ້າໄປແຊກແຊງການເຮັດວຽກຂອງ ແພດຫມໍ ແລະ ປະຊາຊົນທີ່ໄດ້ຮັບຜົນປະໂຫຍດຈາກໂຄງການແຕ່ຢ່າງໃດ.







ການຝຶກອົບຮົມ, ສະຫນັບສະຫນູນ, ການຮັກສາ.

ທ່ານສາມາດມີສ່ວນຮ່ວມກັບສະມາຄົມໄດ້ແນວໃດ?
-ຫາກທ່ານຮູ້ຈັກບຸກຄົນທີ່ສາມາດສື່ສານພາສາຝຣັ່ງຫພາສາອັງກິດໄດ້,ຜູ້ທີ່ມຄີວາມຮດູ້ານວິຊາການນໍ້າ,ສາມາດແຈ້ງໄປຫາສະມາຄົມ. ພວກເຮົາ ກຳລັງຊອກຫາຄູ່ຮ່ວມງານທີ່ເປັນຄົນລາວເພື່ອດຳເນີນໂຄງການດັ່ງກ່າວ;
-ທ່ານສາມາດມອບເຄື່ອງຫັດຖະກຳຫເຄື່ອງບລິໂພກໃນທ້ອງຖິ່ນໃຫ້ພວກເຮົາເພື່ອນຳໄປຂາຍທີ່ຮ້ານຄ້າຂອງ ສະມາຄົມທີ່ປະເທດຝຣັ່ງ ແລະ ຜົນກຳໄລທັງຫມົດແມ່ນຈະໄດ້ບລິຈາກໃຫ້ແກ່ການເຄື່ອນໄຫວໂຄງການໃນປະເທດລາວ.
- ການເຜີຍແຜ່ຂໍ້ມູນຂ່າວສານການເຮັດວຽກຂອງສະມາຄົມໃຫ້ຄົນອ້ອມຂ້າງຮັບຮຫູ້ າຍທສີ່ ດຸ ທີ່ເປັນໄປໄດ້.